ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຫົວພັນ

ເລກທີ 09 /ຈຂ.

ຊຳເໜືອ, ລົງວັນທີ 25 / ທັນວາ/2013.

# ຄຳສັ່ງແນະນຳ

**ເຖິງ: ບັນດາພະແນກການ ຫ້ອງການ-ອົງການທຽບເທົ່າ, ກອງບັນຊາການ ທະຫານ-ຕຳຫຼວດ, 9 ເມືອງທົ່ວແຂວງ, ລັດວິສາຫະກິດ, ບັນດາບໍລິສັດລົງທຶນພາຍໃນ ແລະ ຕ່າງປະເທດ, ພໍ່ຄ້າຊາວຂາຍ,ຕະຫຼອດຮອດປະຊາຊົນບັນດາເຜົ່າໃນທົ່ວແຂວງຫົວພັນ**

**ເລື່ອງ: ຫ້າມນຳໃຊ້ອາວຸດທຸກປະເພດ ແລະ ເຄື່ອງມືອຸປະກອນຕ່າງໆ ເພື່ອລ່າສັດນ້ຳ-ສັດປ່າແບບດັບສູນ.**

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24/ທັນວາ/2007.
- ອີງຕາມ ໃບສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ ສະບັບເລກທີ 0560/ກປຂ, ລົງວັນທີ 19 ທັນວາ 2013.

ເພື່ອເຮັດໃຫ້ການຄຸ້ມຄອງ, ປົກປັກຮັກສາສັດນ້ຳ-ສັດປ່າ ເຂົ້າສູ່ລະບຽບຫຼັກການ ແລະ ກົດໝາຍເທື່ອລະກ້າວ ເພື່ອໃຫ້ສັດນ້ຳ-ສັດປ່າ ມີຄວາມຍືນຍົງ ທັງເປັນທ່າແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງໂດຍສະເພາະ ແລະ ແກ້ໄຂບັນຫາການຄ້າຂາຍສັດນ້ຳ-ສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ທັງເປັນການ ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດລະບຽບກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ໂດຍສະເພາະແມ່ນບັນຫາການຄຸ້ມຄອງອາວຸດເສິກ, ປືນລ່າເນື້ອ ແລະ ອຸປະກອນທຸກປະເພດທີ່ທຳລາຍ ຫຼື ລ່າສັດນ້ຳ-ສັດປ່າແບບດັບສູນ.

## ເຈົ້າແຂວງ ແຂວງຫົວພັນ ອອກຄຳສັ່ງແນະນຳດັ່ງນີ້:

1. ໃຫ້ທຸກພາກສ່ວນກ່ຽວຂ້ອງ ເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານໂຄສະນາ ສຶກສາອົບຮົມລະບຽບກົດໝາຍວ່າດ້ວຍສັດນ້ຳ-ສັດປ່າຢ່າງກ້ວາງຂວາງ ເພື່ອແນໃສ່ການຄຸ້ມຄອງ ແລະ ນຳໃຊ້ ສັດນ້ຳ-ສັດປ່າໃຫ້ມີຄວາມຍືນຍົງ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກຳນົດໄວ້.
2. ໃຫ້ເຈົ້າໜ້າທີ່ທະຫານ, ຕຳຫຼວດ ເຮັດໜ້າທີ່ຄຸ້ມຄອງອາວຸດເສິກ, ອາວຸດລ່າເນື້ອ ແລະ ຄຸ້ມຄອງການຜະລິດປືນລ່າເນື້ອ ໃຫ້ທັນເຂົ້າສູ່ລະບຽບການຢ່າງເຂັ້ມງວດ ເພື່ອຫຼີກລ້ຽງການນຳໃຊ້ອາວຸດເສິກລ່າສັດປ່າ

3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ເພີ່ມທະວີກວດກາການຊື້-ຂາຍເຄື່ອງມືລ່າສັດນ້ຳ-ສັດປ່າ ທີ່ມີລັກສະນະດັບສູນ, ອຸປະກອນປະກອບປືນ ຫຼື ເປັນກະສູນປືນ ແລະ ໃຫ້ນຳໃຊ້ມາດຕາການຕໍ່ຜູ້ລະເມີດຕາມລະບຽບກົດໝາຍ ເພື່ອແກ້ໄຂຢ່າງສອດຄ່ອງ.

4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ເພີ່ມທະວີການກວດກາ ການນຳໃຊ້ສັດນ້ຳ-ສັດປ່າ ເພື່ອບໍລິໂພກ, ການຊື້-ຂາຍຕາມທ້ອງຕະຫຼາດ, ຮ້ານອາຫານ, ການນຳເຂົ້າ ແລະ ສົ່ງອອກ ຕ້ອງໃຫ້ຖືກຕ້ອງຕາມລະບຽບກົດໝາຍວ່າດ້ວຍສັດນ້ຳ-ສັດປ່າຢ່າງເຂັ້ມງວດ.

5. ການແກ້ໄຂ ຕໍ່ຜູ້ລະເມີດນຳໃຊ້ອາວຸດເສິກເປັນຕົ້ນແມ່ນປືນຫຼວງ, ປືນແກັບເພື່ອລ່າສັດນ້ຳ-ສັດປ່າ ແລະ ອຸປະກອນລ່າສັດນ້ຳ-ສັດປ່າ ທີ່ມີລັກສະນະດັບສູນອື່ນໆ ທີ່ບໍ່ໄດ້ກຳນົດໄວ້ກົດໝາຍ ຕ້ອງໄດ້ແກ້ໄຂຢ່າງທັນການ ແລະ ສອດຄອງກັບລະບຽບກົດໝາຍ.

6. ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ຕ້ອງເພີ່ມທະວີຄວາມຮັບຜິດຊອບຕໍ່ການກວດກາຕິດຕາມ ແລະ ເປັນເຈົ້າການສະກັດກັ້ນການນຳໃຊ້ອາວຸດ ແລະ ເຄື່ອງມືອຸປະກອນລ່າສັດນ້ຳ-ສັດປ່າ ໃນເຂດຄຸ້ມຄອງຂອງຕົນໃຫ້ໜັກແໜ້ນ.

7. ການນຳໃຊ້ສັດນ້ຳ-ສັດປ່າ ປະເພດຄຸ້ມຄອງ ແລະ ປະເພດທົ່ວໄປ ເພື່ອສາທາລະນະປະໂຫຍດ, ເພື່ອຄອບຄົວ, ການນຳໃຊ້ຕາມຮີດຄອງ ແລະ ການນຳໃຊ້ເພື່ອທຸລະກິດ ຕ້ອງປະຕິບັດຕາມລະບຽບ ແລະ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ຢ່າງເຂັ້ມງວດ

ຄຳສັ່ງແນະນຳສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮ/ ເຈົ້າແຂວງ ແຂວງຫົວພັນ

ດຣ.ຈັນແສງ ພິມມະວົງ

<u>ບ່ອນນຳສົ່ງ:</u>

- ພະແນກກະສິກຳ ແລະ ປ່າໄມ້ 1 ສະບັບ.
- ກອງບັນຊາການທະຫານ, ຕຳຫຼວດ 1 ສະບັບ.
- ພະແນກການອ້ອມຂ້າງແຂວງບ່ອນລະ 1 ສະບັບ.
- 9 ເມືອງທົ່ວແຂວງ ເມືອງລະ 1 ສະບັບ.
- ຫ້ອງການ ກປ ເມືອງ 1 ສະບັບ.
- ສຳເນົາ 1 ສະບັບ.